ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----=====000====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 0025 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 26 OCT 2016

# ຂໍ້ຕົກລົງ
# ວ່າດ້ວຍການໂອນຮຸ້ນ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21 /ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ ລົງວັນທີ 24 ກໍລະກົດ 2013;
- ອີງຕາມໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 0149/ສຄຄຊ, ລົງວັນທີ 13 ຕຸລາ 2016.

ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ວິທີການ ແລະ ຂັ້ນຕອນ ກ່ຽວກັບການໂອນຮຸ້ນ ເພື່ອເຮັດໃຫ້ການໂອນຮຸ້ນ ດຳເນີນໄປຢ່າງຖືກຕ້ອງ ຕາມລະບຽບກົດໝາຍຂອງ ສປປ ລາວ ແນໃສ່ຮັບປະກັນເຮັດໃຫ້ການໂອນຮຸ້ນມີຄວາມເປັນລະບຽບຮຽບຮ້ອຍ, ໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 ການໂອນຮຸ້ນ**

ການໂອນຮຸ້ນ ແມ່ນການປ່ຽນແປງກຳມະສິດ ກ່ຽວກັບຮຸ້ນຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ຈາກ ຜູ້ຖືຄອງຮຸ້ນໜຶ່ງ ໄປຫາ ຜູ້ຖືຄອງຮຸ້ນອື່ນ ຕາມຮູບແບບທີ່ໄດ້ກຳນົດໄວ້ໃນ ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ໂດຍບໍ່ຜ່ານຂັ້ນຕອນການຊື້-ຂາຍໃນຕະຫຼາດຫຼັກຊັບ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຮຸ້ນ** ໝາຍເຖິງ ຮຸ້ນຈົດທະບຽນ ໃນຕະຫຼາດຫຼັກຊັບ;

2. **ຜູ້ໂອນ ຫຼື ຜູ້ຮັບໂອນ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຫຼື ພາກສ່ວນໃດໜຶ່ງ;
3. **ຜູ້ໂອນ** ໝາຍເຖິງ ຜູ້ທີ່ມີຈຸດປະສົງໂອນຮຸ້ນທີ່ຕົນຖືຄອງ ໃຫ້ແກ່ ຜູ້ຮັບໂອນ;
4. **ຜູ້ຮັບໂອນ** ໝາຍເຖິງ ຜູ້ທີ່ໄດ້ຮັບສິດໃນການເປັນເຈົ້າຂອງຮຸ້ນທີ່ໄດ້ຮັບຈາກ ຜູ້ໂອນ;
5. **ການປ່ຽນແປງກຳມະສິດກ່ຽວກັບຮຸ້ນ** ໝາຍເຖິງ ການປ່ຽນແປງກຳມະສິດຂອງຮຸ້ນໃນການ ຄອບຄອງ, ນຳໃຊ້, ໄດ້ຮັບໝາກຜົນ ແລະ ຊີ້ຂາດ ຈາກ ຜູ້ໂອນ ໄປຫາ ຜູ້ຮັບໂອນ ທີ່ຊື່ບັນຊີຫຼັກຊັບຕ່າງກັນ;
6. **ກຳມະສິດກ່ຽວກັບຮຸ້ນ** ໝາຍເຖິງ ສິດອັນຄົບຖ້ວນ ແລະ ເດັດຂາດຂອງ ລັດ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນ ໃນການ ຄອບຄອງ, ນຳໃຊ້, ໄດ້ຮັບໝາກຜົນ ແລະ ຊີ້ຂາດ ກ່ຽວກັບ ຮຸ້ນ ທີ່ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 4 ຫຼັກການໃນການໂອນ**

ການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຄວາມສະໝັກໃຈ ແລະ ຕາມກົດໝາຍ;
2. ປົກປ້ອງສິດ ແລະ ຜົນປະໂຫຍດຂອງ ຜູ້ໂອນ ແລະ ຜູ້ຮັບໂອນ;
3. ຄວາມສະເໝີພາບ;
4. ຄວາມສອດຄ່ອງກັບລະບຽບກົດໝາຍ ຂອງ ສປປ ລາວ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຜູ້ໂອນ, ຜູ້ຮັບໂອນ, ທະນາຄານດູແລຊັບສິນ, ບໍລິສັດຫຼັກຊັບ,ຕະຫຼາດຫຼັກຊັບ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບການໂອນຮຸ້ນໃນຕະຫຼາດຫຼັກຊັບ.

## ໝວດທີ 2
## ຮູບແບບ, ເງື່ອນໄຂ ແລະ ຂັ້ນຕອນ ໃນການໂອນຮຸ້ນ

**ມາດຕາ 6 ຮູບແບບການໂອນຮຸ້ນ**

ການໂອນຮຸ້ນ ປະກອບດ້ວຍ ສີ່ ຮູບແບບ ດັ່ງນີ້:

1. ການໂອນຮຸ້ນ ຕາມສັນຍາ;
2. ການໂອນຮຸ້ນ ຕາມການສືບທອດມູນມໍລະດົກ ຫຼື ການແບ່ງປັນສິນສົມສ້າງ;
3. ການໂອນຮຸ້ນ ຕາມຄຳຕັດສິນ ຫຼື ຄຳພິພາກສາ ຂອງສານ;
4. ການໂອນຮຸ້ນ ຕາມການຮ້ອງຂໍ.

**ມາດຕາ 7 ຮູບແບບການໂອນຮຸ້ນຕາມສັນຍາ**

ການໂອນຮຸ້ນຕາມສັນຍາ ແມ່ນການປ່ຽນແປງກຳມະສິດ ກ່ຽວກັບການຖືຄອງຮຸ້ນ ຈາກ ຜູ້ໂອນ ໄປຫາ ຜູ້ຮັບໂອນ ຕາມທີ່ລະບຸໄວ້ໃນສັນຍາ ເປັນຕົ້ນ: ສັນຍາຄ້ຳປະກັນ, ສັນຍາມອບຊັບ, ສັນຍາຍົກຊັບ ຊຶ່ງເນື້ອໃນສັນຍາດັ່ງກ່າວ ຕ້ອງສອດຄ່ອງ ກັບກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ແລະ ກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ.

**ມາດຕາ 8 ຮູບແບບການໂອນຮຸ້ນຕາມການສືບທອດມູນມໍຣະດົກ ຫຼື ການແບ່ງປັນສິນສົມສ້າງ**

ການໂອນຮຸ້ນຕາມການສືບທອດມູນມໍຣະດົກ ແມ່ນການປ່ຽນແປງກຳມະສິດ ກ່ຽວກັບການຖືຄອງຮຸ້ນ ຈາກ ຜູ້ຖືຄອງຮຸ້ນທີ່ເສຍຊີວິດ ມາເປັນ ກຳມະສິດຂອງຜູ້ໄດ້ຮັບການສືບທອດມູນມໍຣະດົກ ຕາມກົດໝາຍ ຫຼື ຕາມພິໄນກຳ.

ການໂອນຮຸ້ນຕາມການແບ່ງປັນສິນສົມສ້າງ ແມ່ນການປ່ຽນແປງກຳມະສິດ ກ່ຽວກັບການຖືຄອງຮຸ້ນ ຈາກ ຜູ້ຖືຄອງທີ່ເປັນ ຄູ່ຜົວເມັຍ, ຜົວ ຫຼື ເມັຍ ມາເປັນ ກຳມະສິດຂອງ ຜົວ ຫຼື ເມັຍ ຫຼື ລູກ ຫຼື ບຸກຄົນອື່ນ ກ່ອນ ຫຼື ຫຼັງການຢ່າຮ້າງ ດ້ວຍຄວາມສະໝັກໃຈ.

**ມາດຕາ 9 ຮູບແບບການໂອນຮຸ້ນຕາມ ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານ**

ການໂອນຮຸ້ນຕາມ ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານ ແມ່ນການປ່ຽນແປງກຳມະສິດ ກ່ຽວກັບການຖືຄອງຮຸ້ນ ຈາກ ຜູ້ໂອນ ໄປຫາ ຜູ້ຮັບໂອນ ຕາມຄຳຕັດສິນ ຫຼື ຄຳພິພາກສາ ຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ.

**ມາດຕາ 10 ຮູບແບບການໂອນຮຸ້ນຕາມການຮ້ອງຂໍ**

ການໂອນຮຸ້ນຕາມການຮ້ອງຂໍ ແມ່ນການປ່ຽນແປງກຳມະສິດ ກ່ຽວກັບການຖືຄອງຮຸ້ນຈາກ ຜູ້ຮ້ອງຂໍ ມາເປັນ ກຳມະສິດຂອງ ຜູ້ຮັບໂອນ ທີ່ບໍ່ນອນຢູ່ໃນສາມຮູບແບບຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7, ມາດຕາ 8 ແລະ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 11 ເງື່ອນໄຂການໂອນຮຸ້ນ**

ຜູ້ໂອນ ແລະ ຜູ້ຮັບໂອນ ຮຸ້ນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຜູ້ທີ່ມີຄວາມສາມາດທາງດ້ານການປະພຶດ ຫຼື ເປັນຜູ້ທີ່ໄດ້ຮັບການແຕ່ງຕັ້ງ ຈາກສານປະຊາຊົນໃຫ້ເປັນຜູ້ຕາງໜ້າບຸກຄົນອື່ນ ໃນກໍລະນີບໍ່ມີຄວາມສາມາດທາງດ້ານການປະພຶດ;
2. ສອດຄ່ອງກັບຮູບແບບການໂອນຮຸ້ນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7, ມາດຕາ 8, ມາດຕາ 9 ແລະ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;
3. ສະໜອງຂໍ້ມູນຫຼັກຖານ ທີ່ກ່ຽວຂ້ອງກັບການໂອນ ຫຼື ຮັບໂອນ ແລະ ໄດ້ຮັບການຢັ້ງຢືນ ຈາກພາກສ່ວນທີ່ກ່ຽວຂ້ອງ;
4. ມີບັນຊີຫຼັກຊັບ ກັບ ບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ ທີ່ເປັນສະມາຊິກຂອງຕະຫຼາດຫຼັກຊັບ;
5. ເງື່ອນໄຂອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 12 ຂັ້ນຕອນການໂອນຮຸ້ນ**

ການໂອນຮຸ້ນ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ປະກອບເອກະສານທີ່ກ່ຽວຂ້ອງກັບການໂອນຮຸ້ນ ເພື່ອຍື່ນຕໍ່ບໍລິສັດຫຼັກຊັບ ໂດຍກົງ ຫຼື ຜ່ານທະນາຄານດູແລຊັບສິນເພື່ອຍື່ນຕໍ່ ບໍລິສັດຫຼັກຊັບ ກໍລະນີ ຜູ້ໂອນໃຊ້ບໍລິການ ທະນາຄານດູແລຊັບສິນ;

2. ບໍລິສັດຫຼັກຊັບ ຄົ້ນຄວ້າ ເອກະສານປະກອບກ່ຽວກັບການໂອນຮຸ້ນ ກ່ອນສະເໜີ ຕໍ່ ຕະຫຼາດຫຼັກຊັບ ພິຈາລະນາ;
3. ຕະຫຼາດຫຼັກຊັບ ຄົ້ນຄວ້າ ເອກະສານປະກອບກ່ຽວກັບການໂອນຮຸ້ນ ແລະ ດຳເນີນການໂອນຕາມຂັ້ນຕອນ ແລະ ລະບຽບການ.

ກໍລະນີ ການໂອນຮຸ້ນນອກຈາກທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ຕ້ອງຜ່ານການມີຄຳເຫັນຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 13 ການປະກອບເອກະສານການໂອນຮຸ້ນ**

ຜູ້ທີ່ມີຈຸດປະສົງໂອນຮຸ້ນ ຕ້ອງປະກອບເອກະສານ ຕາມ ແຕ່ລະ ຮູບແບບ ດັ່ງນີ້:

1. **ການໂອນຮຸ້ນຕາມ ສັນຍາ**
   1) ໃບຄຳຮ້ອງຂໍໂອນຮຸ້ນຕາມແບບພິມ ຂອງຕະຫຼາດຫຼັກຊັບ;
   2) ໃບຢັ້ງຢືນ ກ່ຽວກັບບັນຊີຫຼັກຊັບຂອງ ຜູ້ໂອນ ແລະ ຜູ້ຮັບໂອນ ຮຸ້ນ ຈາກບໍລິສັດຫຼັກຊັບ;
   3) ໃບມອບສິດຈາກ ຜູ້ໂອນ ໃຫ້ແກ່ ບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ ເພື່ອປະຕິບັດສິດ ແລະ ໜ້າທີ່ແທນຕົນ;
   4) ໃບຢັ້ງຢືນທີ່ຢູ່ປັດຈຸບັນ, ສຳເນົາປຶ້ມສຳມະໂນຄົວ ຫຼື ສຳເນົາບັດປະຈຳຕົວ ຂອງຜູ້ໂອນ ແລະ ຜູ້ຮັບໂອນ, ກໍລະນີ ຜູ້ໂອນ ຫຼື ຜູ້ຮັບໂອນ ເປັນຄົນຕ່າງປະເທດ ກໍຕ້ອງສຳເນົາໜັງສືຜ່ານແດນ;
   5) ສຳເນົາ ໃບທະບຽນວິສາຫະກິດ ຫຼື ໃບຢັ້ງຢືນຖານະນິຕິບຸກຄົນ ຂອງຜູ້ໂອນ ແລະ ຜູ້ຮັບໂອນທີ່ເປັນນິຕິບຸກຄົນ, ກໍລະນີ ນິຕິບຸກຄົນ ດັ່ງກ່າວ ຖືສັນຊາດຕ່າງປະເທດ ໃບທະບຽນວິສາຫະກິດ ຫຼື ໃບຢັ້ງຢືນຖານະຕິບຸກຄົນນັ້ນ ຕ້ອງໄດ້ຮັບການຢັ້ງຢືນ ຈາກອົງການທະບຽນສານຂອງປະເທດທີ່ອອກໃບອະນຸຍາດສ້າງຕັ້ງນິຕິບຸກຄົນດັ່ງກ່າວ;
   6) ສັນຍາຄ້ຳປະກັນ ຫຼື ສັນຍາມອບຊັບ ຫຼື ສັນຍາຍົກຊັບ ແລະ ສັນຍາ ອື່ນທີ່ກ່ຽວຂ້ອງ ໂດຍຜ່ານການຢັ້ງຢືນຄວາມຖືກຕ້ອງ ຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ;
   7) ເອກະສານອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

2. **ການໂອນຮຸ້ນຕາມ ການສືບທອດມູນມໍຣະດົກ ຫຼື ການແບ່ງປັນສິນສົມສ້າງ**
   1) ໃບຄຳຮ້ອງຂໍໂອນຮຸ້ນຕາມແບບພິມ ຂອງຕະຫຼາດຫຼັກຊັບ;
   2) ໃບຢັ້ງຢືນ ກ່ຽວກັບບັນຊີຫຼັກຊັບຂອງ ຜູ້ໂອນ ແລະ ຜູ້ຮັບໂອນ ຮຸ້ນ ຈາກບໍລິສັດຫຼັກຊັບ;
   3) ໃບມອບສິດຈາກ ຜູ້ໂອນ ໃຫ້ແກ່ ບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ ເພື່ອປະຕິບັດສິດ ແລະ ໜ້າທີ່ແທນຕົນ;
   4) ໃບຢັ້ງຢືນທີ່ຢູ່ປັດຈຸບັນ, ສຳເນົາປຶ້ມສຳມະໂນຄົວ ຫຼື ສຳເນົາບັດປະຈຳຕົວ ຂອງຜູ້ໂອນ ແລະ ຜູ້ຮັບໂອນ, ກໍລະນີ ຜູ້ໂອນ ຫຼື ຜູ້ຮັບໂອນ ເປັນຄົນຕ່າງປະເທດ ກໍຕ້ອງສຳເນົາໜັງສືຜ່ານແດນ;
   5) ສຳເນົາ ໃບທະບຽນວິສາຫະກິດ ຫຼື ໃບຢັ້ງຢືນຖານະນິຕິບຸກຄົນ ຂອງຜູ້ໂອນ ແລະ ຜູ້ຮັບໂອນທີ່ເປັນນິຕິບຸກຄົນ, ກໍລະນີ ນິຕິບຸກຄົນ ດັ່ງກ່າວ ຖືສັນຊາດຕ່າງປະເທດ ໃບທະບຽນວິສາຫະກິດ ຫຼື ໃບຢັ້ງຢືນຖານະຕິບຸກຄົນນັ້ນ ຕ້ອງໄດ້ຮັບການຢັ້ງຢືນ ຈາກອົງການທະບຽນສານຂອງປະເທດທີ່ອອກໃບອະນຸຍາດສ້າງຕັ້ງນິຕິບຸກຄົນດັ່ງກ່າວ;
   6) ໃບຢັ້ງຢືນ ການເສຍຊີວິດ ຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ ຫຼື ສະຖານທູດຂອງປະເທດກ່ຽວຂ້ອງ ປະຈຳຢູ່ ສປປ ລາວ (ຖ້າເສຍຊີວິດ);

7) ໃບຢັ້ງຢືນ ການແບ່ງປັນມູນມໍຣະດົກຕາມກົດໝາຍ ຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ;
8) ສຳເນົາ ພີໄນກຳ ທີ່ໄດ້ຮັບການຢັ້ງຢືນ ຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ;
9) ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດ (ກໍລະນີ ຢ່າຮ້າງ);
10) ໃບຢັ້ງຢືນ ກ່ຽວກັບການແບ່ງປັນສິນສົມສ້າງ ທີ່ໄດ້ຮັບການຢັ້ງຢືນຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ;
11) ເອກະສານອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

### 3. ການໂອນຮຸ້ນຕາມ ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານປະຊົນ

1) ໃບຄຳຮ້ອງຂໍໂອນຮຸ້ນຕາມແບບພິມ ຂອງຕະຫຼາດຫຼັກຊັບ;
2) ໃບຢັ້ງຢືນ ກ່ຽວກັບບັນຊີຫຼັກຊັບຂອງ ຜູ້ໂອນ ແລະ ຜູ້ຮັບໂອນ ຮຸ້ນ ຈາກບໍລິສັດຫຼັກຊັບ;
3) ໃບມອບສິດຈາກ ຜູ້ໂອນ ໃຫ້ແກ່ ບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ ເພື່ອປະຕິບັດສິດ ແລະ ໜ້າທີ່ແທນຕົນ;
4) ໃບຢັ້ງຢືນທີ່ຢູ່ປັດຈຸບັນ, ສຳເນົາປຶ້ມສຳມະໂນຄົວ ຫຼື ສຳເນົາບັດປະຈຳຕົວ ຂອງຜູ້ໂອນ ແລະ ຜູ້ຮັບໂອນ, ກໍລະນີ ຜູ້ໂອນ ຫຼື ຜູ້ຮັບໂອນ ເປັນຄົນຕ່າງປະເທດ ກໍຕ້ອງສຳເນົາໜັງສືຜ່ານແດນ;
5) ສຳເນົາ ໃບທະບຽນວິສາຫະກິດ ຫຼື ໃບຢັ້ງຢືນຖານະນິຕິບຸກຄົນ ຂອງຜູ້ໂອນ ແລະ ຜູ້ຮັບໂອນທີ່ເປັນນິຕິບຸກຄົນ, ກໍລະນີ ນິຕິບຸກຄົນ ດັ່ງກ່າວ ຖືສັນຊາດຕ່າງປະເທດ ໃບທະບຽນວິສາຫະກິດ ຫຼື ໃບຢັ້ງຢືນຖານະຕິບຸກຄົນນັ້ນ ຕ້ອງໄດ້ຮັບການຢັ້ງຢືນ ຈາກອົງການທະບຽນສານຂອງປະເທດທີ່ອອກໃບອະນຸຍາດສ້າງຕັ້ງນິຕິບຸກຄົນດັ່ງກ່າວ;
6) ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດ;
7) ເອກະສານອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

### 4. ການໂອນຮຸ້ນຕາມ ການຮ້ອງຂໍ

1) ໃບຄຳຮ້ອງຂໍໂອນຮຸ້ນຕາມແບບພິມຂອງ ຕະຫຼາດຫຼັກຊັບ;
2) ໃບຢັ້ງຢືນ ກ່ຽວກັບບັນຊີຫຼັກຊັບຂອງ ຜູ້ໂອນ ແລະ ຜູ້ຮັບໂອນ ຮຸ້ນ ຈາກບໍລິສັດຫຼັກຊັບ;
3) ໃບມອບສິດຈາກ ຜູ້ໂອນ ໃຫ້ແກ່ ບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ ເພື່ອປະຕິບັດສິດ ແລະ ໜ້າທີ່ແທນຕົນ;
4) ໃບຢັ້ງຢືນທີ່ຢູ່ປັດຈຸບັນ, ສຳເນົາປຶ້ມສຳມະໂນຄົວ ຫຼື ສຳເນົາບັດປະຈຳຕົວ ຂອງຜູ້ໂອນ ແລະ ຜູ້ຮັບໂອນ, ກໍລະນີ ຜູ້ໂອນ ຫຼື ຜູ້ຮັບໂອນ ເປັນຄົນຕ່າງປະເທດ ກໍຕ້ອງສຳເນົາໜັງສືຜ່ານແດນ;
5) ສຳເນົາ ໃບທະບຽນວິສາຫະກິດ ຫຼື ໃບຢັ້ງຢືນຖານະນິຕິບຸກຄົນ ຂອງຜູ້ໂອນ ແລະ ຜູ້ຮັບໂອນທີ່ເປັນນິຕິບຸກຄົນ, ກໍລະນີ ນິຕິບຸກຄົນ ດັ່ງກ່າວ ຖືສັນຊາດຕ່າງປະເທດ ໃບທະບຽນວິສາຫະກິດ ຫຼື ໃບຢັ້ງຢືນຖານະຕິບຸກຄົນນັ້ນ ຕ້ອງໄດ້ຮັບການຢັ້ງຢືນ ຈາກອົງການທະບຽນສານຂອງປະເທດທີ່ອອກໃບອະນຸຍາດສ້າງຕັ້ງນິຕິບຸກຄົນດັ່ງກ່າວ;
6) ເອກະສານອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ບໍລິສັດຫຼັກຊັບ ທີ່ໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ການໂອນຮຸ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້ ຕ້ອງຄົ້ນຄວ້າ ແລະ ກວດກາຄວາມ ຄົບຖ້ວນ ແລະ ຖືກຕ້ອງ ໃຫ້ສຳເລັດພາຍໃນກຳນົດເວລາ ສິບວັນ ລັດຖະການ ກ່ອນຍື່ນເອກະສານດັ່ງກ່າວ ຕໍ່ ຕະຫຼາດຫຼັກຊັບ ພິຈາລະນາ.

**ມາດຕາ 14 ພິຈາລະນາການໂອນຮຸ້ນ**

ທະນາຄານດູແລຊັບສິນ ຕ້ອງຄົ້ນຄວ້າ ແລະ ພິຈາລະນາ ພາຍໃນກຳນົດເວລາ ສາມວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ ເພື່ອຍື່ນຕໍ່ ບໍລິສັດຫຼັກຊັບ ແລະ ແຈ້ງຕໍ່ຕະຫຼາດຫຼັກຊັບ.

ບໍລິສັດຫຼັກຊັບ ຕ້ອງຄົ້ນຄວ້າ ແລະ ພິຈາລະນາ ຕາມການສະເໜີຂອງ ທະນາຄານດູແລຊັບສິນ ພາຍໃນກຳນົດເວລາ ສາມວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ ເພື່ອຍື່ນ ຕໍ່ ຕະຫຼາດຫຼັກຊັບ.

ຕະຫຼາດຫຼັກຊັບ ຕ້ອງຄົ້ນຄວ້າ ແລະ ພິຈາລະນາ ຕາມການສະເໜີຂອງ ບໍລິສັດຫຼັກຊັບ ພາຍໃນກຳນົດເວລາ ສາມວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ ເພື່ອດຳເນີນການໂອນຮຸ້ນ ແລະ ແຈ້ງຕໍ່ບໍລິສັດຫຼັກຊັບ ແລະ ທະນາຄານດູແລຊັບສິນ ກໍລະນີ ຜູ້ໂອນ ໃຊ້ບໍລິການທະນາຄານດູແລຊັບສິນ.

ກໍລະນີ ຕະຫຼາດຫຼັກຊັບ ຫາກເຫັນວ່າ ການສະເໜີຂໍໂອນຮຸ້ນດັ່ງກ່າວ ບໍ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ຕະຫຼາດຫຼັກຊັບ ຕ້ອງສະເໜີ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອຄົ້ນຄວ້າ ແລະ ພິຈາລະນາ.

**ມາດຕາ 15 ການຂຶ້ນທະບຽນ ແລະ ຜົນສັກສິດ ກ່ຽວກັບການໂອນຮຸ້ນ**

ການຂຶ້ນທະບຽນຮຸ້ນທີ່ປ່ຽນແປງກຳມະສິດຈາກການໂອນຕ້ອງປະຕິບັດຕາມຂັ້ນຕອນ ແລະ ລະບຽບການຂອງ ຕະຫຼາດຫຼັກຊັບ. ຜົນສັກສິດຂອງການໂອນຮຸ້ນດັ່ງກ່າວແມ່ນນັບແຕ່ ຕະຫຼາດຫຼັກຊັບ ໄດ້ບັນທຶກເຂົ້າໃນບັນຊີຂອງສູນຮັບຝາກຫຼັກຊັບ ຫຼື ນັບແຕ່ວັນໄດ້ບັນທຶກເຂົ້າໃນປຶ້ມບັນຊີທະບຽນຜູ້ຖືຄອງຫຼັກຊັບ.

**ມາດຕາ 16 ການແຈ້ງຜົນການໂອນຮຸ້ນ**

ພາຍຫຼັງ ຕະຫຼາດຫຼັກຊັບ ໄດ້ສຳເລັດການບັນທຶກເຂົ້າໃນບັນຊີຂອງສູນຮັບຝາກຫຼັກຊັບ ຫຼື ນັບແຕ່ວັນໄດ້ບັນທຶກເຂົ້າໃນປຶ້ມບັນຊີທະບຽນຜູ້ຖືຄອງຫຼັກຊັບ ຕະຫຼາດຫຼັກຊັບຕ້ອງແຈ້ງຜົນການໂອນຮຸ້ນດັ່ງກ່າວໃຫ້ແກ່ ບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ ກໍລະນີ ຜູ້ໂອນ ໃຊ້ບໍລິການຂອງທະນາຄານດູແລຊັບສິນ ເພື່ອໃຫ້ ບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ ແຈ້ງຜົນການໂອນຮຸ້ນ ຕໍ່ ຜູ້ໂອນ ຫຼື ຜູ້ຮັບໂອນ ຊາບ.

## ໝວດທີ 3
## ສິດ ແລະ ໜ້າທີ່ ຂອງຜູ້ມີສ່ວນຮ່ວມໃນການໂອນຮຸ້ນ

**ມາດຕາ 17 ຜູ້ມີສ່ວນຮ່ວມໃນການໂອນຮຸ້ນ**

ຜູ້ມີສ່ວນຮ່ວມໃນການໂອນຮຸ້ນ ປະກອບດ້ວຍ ຜູ້ໂອນ, ຜູ້ຮັບໂອນ, ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງກັບການໂອນຮຸ້ນ ດັ່ງກ່າວ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງຜູ້ໂອນ**

ຜູ້ໂອນມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະກອບຄຳຮ້ອງຂໍໂອນຮຸ້ນ ຕາມແບບພິມຂອງ ຕະຫຼາດຫຼັກຊັບ;

2. ສະໜອງຂໍ້ມູນໃຫ້ ຄົບຖ້ວນ ແລະ ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງສະບັບນີ້, ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ແລະ ຕາມການຮຽກຮ້ອງຂອງ ທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ ຫຼື ຕະຫຼາດຫຼັກຊັບ ຫຼື ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ຊີ້ແຈງຕໍ່ກັບບັນດາຂໍ້ມູນທີ່ກ່ຽວຂ້ອງກັບການໂອນຮຸ້ນ ຕາມການສະເໜີຂອງ ທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ ຫຼື ຕະຫຼາດຫຼັກຊັບ ຫຼື ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນກໍລະນີຈຳເປັນ;
4. ຈ່າຍຄ່າປັບໃໝ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກໍລະນີ ລະເມີດຂໍ້ຫ້າມ ແລະ ຂໍ້ກຳນົດອື່ນ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
5. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງຜູ້ຮັບໂອນ**

ຜູ້ຮັບໂອນມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສະໜອງຂໍ້ມູນໃຫ້ຄົບຖ້ວນ ແລະ ຖືກຕ້ອງຕາມຄວາມເປັນຈິງ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງສະບັບນີ້, ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ແລະ ຕາມການຮຽກຮ້ອງຂອງ ທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ ຫຼື ຕະຫຼາດຫຼັກຊັບ ຫຼື ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ຊີ້ແຈງຕໍ່ກັບບັນດາຂໍ້ມູນທີ່ກ່ຽວຂ້ອງກັບການໂອນຮຸ້ນ ຕາມການສະເໜີຂອງ ທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ ຫຼື ຕະຫຼາດຫຼັກຊັບ ຫຼື ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນກໍລະນີຈຳເປັນ;
3. ມີບັນຊີຫຼັກຊັບ ກັບ ບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ ທີ່ເປັນສະມາຊິກຂອງ ຕະຫຼາດຫຼັກຊັບ;
4. ປະຕິບັດພັນທະເສຍ ຄ່າທຳນຽມ ທີ່ກ່ຽວຂ້ອງກັບການໂອນຮຸ້ນຕາມລະບຽບການ;
5. ຈ່າຍຄ່າປັບໃໝ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກໍລະນີ ລະເມີດຂໍ້ຫ້າມ ແລະ ຂໍ້ກຳນົດອື່ນ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ແລະ ສົ່ງຮຸ້ນທີ່ຕົນໄດ້ຮັບໂອນທັງໝົດຈາກ ຜູ້ໂອນ ຄືນໃຫ້ແກ່ ບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ ກໍລະນີ ຜູ້ໂອນ ເປັນລູກຄ້າຂອງ ທະນາຄານດູແລຊັບສິນ;
6. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 20 ສິດ ແລະ ໜ້າທີ່ ທະນາຄານດູແລຊັບສິນ**

ທະນາຄານດູແລຊັບສິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ກວດກາຄວາມຄົບຖ້ວນ ແລະ ຖືກຕ້ອງ ຂອງຄຳຮ້ອງ ແລະ ເອກະສານປະກອບໃນການໂອນຮຸ້ນ ກ່ອນຍື່ນຕໍ່ ບໍລິສັດຫຼັກຊັບ ພິຈາລະນາ;
2. ຊອກຮູ້ ແລະ ຮຽກຮ້ອງຂໍ້ມູນເພີ່ມເຕີມຂອງຜູ້ໂອນ ເພື່ອຢັ້ງຢືນຕົວຕົນທີ່ແທ້ຈິງຂອງ ຜູ້ໂອນ ໃນກໍລະນີຈຳເປັນ ກ່ອນຍື່ນຄຳຮ້ອງ ແລະ ເອກະສານປະກອບ ຕໍ່ ບໍລິສັດຫຼັກຊັບ ພິຈາລະນາ;
3. ສະໜອງຂໍ້ມູນຂອງ ຜູ້ໂອນ ຫຼື ຜູ້ຮັບໂອນ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງສະບັບນີ້, ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ແລະ ຕາມການຮຽກຮ້ອງຂອງ ບໍລິສັດຫຼັກຊັບ ຫຼື ຕະຫຼາດຫຼັກຊັບ ຫຼື ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

4. ປະສານສົມທົບ ແລະ ໃຫ້ຄວາມຮ່ວມມື ກັບ ຜູ້ໂອນ, ຜູ້ຮັບໂອນ, ບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການໂອນຮຸ້ນ;
5. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງບໍລິສັດຫຼັກຊັບ**

1. ຄົ້ນຄວ້າ, ກວດກາຄວາມຄົບຖ້ວນ ແລະ ຖືກຕ້ອງ ຂອງຄຳຮ້ອງ ແລະ ເອກະສານປະກອບໃນການໂອນຮຸ້ນ ກ່ອນຍື່ນຕໍ່ ຕະຫຼາດຫຼັກຊັບ ພິຈາລະນາ;
2. ຊອກຮູ້ ແລະ ຮຽກຮ້ອງຂໍ້ມູນເພີ່ມເຕີມຂອງຜູ້ໂອນ ເພື່ອຢັ້ງຢືນຕົວຕົນທີ່ແທ້ຈິງຂອງ ຜູ້ໂອນ ໃນກໍລະນີຈຳເປັນ ກ່ອນຍື່ນຄຳຮ້ອງ ແລະ ເອກະສານປະກອບ ຕໍ່ ຕະຫຼາດຫຼັກຊັບ ພິຈາລະນາ;
3. ສະໜອງຂໍ້ມູນຂອງ ຜູ້ໂອນ ຫຼື ຜູ້ຮັບໂອນ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງສະບັບນີ້, ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ແລະ ຕາມການຮຽກຮ້ອງຂອງ ຕະຫຼາດຫຼັກຊັບ ຫຼື ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
4. ປະສານສົມທົບ ແລະ ໃຫ້ຄວາມຮ່ວມມື ກັບ ຜູ້ໂອນ, ຜູ້ຮັບໂອນ, ຕະຫຼາດຫຼັກຊັບ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການໂອນຮຸ້ນ;
5. ແຈ້ງໃຫ້ ຕະຫຼາດຫຼັກຊັບ ເພື່ອໂອນຮຸ້ນຈາກບັນຊີຫຼັກຊັບຂອງຕົນ ໃຫ້ແກ່ ຜູ້ລົງທຶນ ພາຍຫຼັງ ຜູ້ລົງທຶນ ຊຳລະເງິນໃຫ້ແກ່ຕົນ ໃນກໍລະນີການຊື້-ຂາຍຫຼັກຊັບໂດຍບໍ່ວາງເງິນມັດຈຳລ່ວງໜ້າ ພາຍຫຼັງກຳນົດເວລາການຊຳລະໃນມື້ທີສອງ (T+2);
6. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງຕະຫຼາດຫຼັກຊັບ**

ຕະຫຼາດຫຼັກຊັບມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ, ກວດກາຄວາມ ຄົບຖ້ວນ ແລະ ຖືກຕ້ອງ ຂອງຄຳຮ້ອງ ແລະ ເອກະສານປະກອບ ກ່ອນການພິຈາລະນາການໂອນຮຸ້ນ;
2. ຊອກຮູ້ ແລະ ຮຽກຂໍ້ມູນເພີ່ມເຕີມຂອງ ຜູ້ໂອນ ຈາກ ຜູ້ໂອນ ຫຼື ຜູ້ຮັບໂອນ ຫຼື ທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ ເພື່ອຢັ້ງຢືນຕົວຕົນທີ່ແທ້ຈິງຂອງ ຜູ້ໂອນ ແລະ ຜູ້ຮັບໂອນ ກໍລະນີຈຳເປັນ;
3. ສະໜອງຂໍ້ມູນຂອງ ຜູ້ໂອນ ຫຼື ຜູ້ຮັບໂອນ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງສະບັບນີ້, ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ແລະ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
4. ປະສານສົມທົບ ແລະ ໃຫ້ຄວາມຮ່ວມມືກັບ ຜູ້ໂອນ, ຜູ້ຮັບໂອນ, ທະນາຄານດູແລຊັບສິນ, ບໍລິສັດຫຼັກຊັບ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການໂອນຮຸ້ນ;
5. ສະເໜີຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກໍລະນີ ຕະຫຼາດຫຼັກຊັບ ຫາກເຫັນວ່າການສະເໜີຂໍໂອນຮຸ້ນດັ່ງກ່າວ ບໍ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
6. ດຳເນີນການໂອນຮຸ້ນ ແລະ ຂຶ້ນທະບຽນຮຸ້ນ ຕາມຂັ້ນຕອນ ແລະ ລະບຽບການຂອງຕະຫຼາດຫຼັກຊັບ;

7. ແຈ້ງຜົນກ່ຽວກັບ ການໂອນຮຸ້ນ ໃຫ້ແກ່ ບໍລິສັດຫຼັກຊັບ ແລະ ທະນາຄານດູແລຊັບສິນ ເພື່ອໃຫ້ ບໍລິສັດຫຼັກຊັບ ແລະ ທະນາຄານດູແລຊັບສິນ ຈະໄດ້ແຈ້ງຜົນການໂອນຮຸ້ນດັ່ງກ່າວ ຕໍ່ ຜູ້ໂອນ ແລະ ຜູ້ຮັບໂອນ;
8. ປະຕິເສດ ການໂອນຮຸ້ນ ກໍລະນີຫາກເຫັນວ່າການຮ້ອງຂໍບໍ່ຄົບ ເງື່ອນໄຂການໂອນຮຸ້ນ ແລະ ປະກອບເອກະສານການໂອນຮຸ້ນ ບໍ່ຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ກຳນົດໄວ້ໃນ ມາດຕາ 11 ແລະ ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້ ພ້ອມທັງແຈ້ງເຫດຜົນຂອງການປະຕິເສດຢ່າງເປັນລາຍລັກອັກສອນ;
9. ເກັບຄ່າທຳນຽມ ທີ່ຕິດພັນກັບການໂອນຮຸ້ນ ຕາມລະບຽບການ;
10. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ, ກວດກາຄວາມ ຄົບຖ້ວນ ແລະ ຖືກຕ້ອງ ຂອງຄຳຮ້ອງ ແລະ ເອກະສານປະກອບ ຕາມການສະເໜີຂອງ ຕະຫຼາດຫຼັກຊັບ;
2. ຊອກຮູ້ ແລະ ຮຽກຂໍ້ມູນເພີ່ມເຕີມຂອງ ຜູ້ໂອນ ຈາກ ຜູ້ໂອນ ຫຼື ຜູ້ຮັບໂອນ ຫຼື ທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ ຫຼື ຕະຫຼາດຫຼັກຊັບ ເພື່ອຢັ້ງຢືນຕົວຕົນທີ່ແທ້ຈິງຂອງ ຜູ້ໂອນ ແລະ ຜູ້ຮັບໂອນ ກໍລະນີຈຳເປັນ;
3. ແຈ້ງໃຫ້ ຕະຫຼາດຫຼັກຊັບ ຊາບກ່ຽວກັບການພິຈາລະນາ ການສະເໜີໂອນຮຸ້ນຂອງ ຕະຫຼາດຫຼັກຊັບ;
4. ຄົ້ນຄວ້າ ສ້າງ ແລະ ປັບປຸງ ຂໍ້ຕົກລົງວ່າດ້ວຍ ຄ່າທຳນຽມ ແລະ ຄ່າປັບໃໝ;
5. ປະຕິບັດ ສິດ ແລະ ໜ້າທີ່ອື່ນຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 4
## ຄ່າທຳນຽມ ແລະ ຂໍ້ຫ້າມ ກ່ຽວກັບການໂອນຮຸ້ນ

**ມາດຕາ 24 ຄ່າທຳນຽມ**

ລາຍລະອຽດກ່ຽວກັບຄ່າທຳນຽມໃນການໂອນຮຸ້ນ ແຕ່ລະຮູບແບບການໂອນ ແມ່ນໄດ້ກຳນົດໄວ້ໃນລະບຽບການສະເພາະ.

ສຳລັບ ຄ່າທຳນຽມກ່ຽວກັບ ການໂອນຮຸ້ນໃນກໍລະນີ ການຊື້-ຂາຍຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ ພາຍຫຼັງ ກຳນົດເວລາການຊຳລະໃນມື້ທີບວກສອງ (T+2) ເປັນຕົ້ນໄປ ແມ່ນຈະຖືກຍົກເວັ້ນຄ່າທຳນຽມໃນການໂອນຮຸ້ນ.

**ມາດຕາ 25 ການກຳນົດລາຄາຮຸ້ນທີ່ໂອນເພື່ອເປັນບ່ອນອີງໃນການເກັບຄ່າທຳນຽມ**

ການກຳນົດລາຄາຮຸ້ນທີ່ໂອນເພື່ອເປັນບ່ອນອີງໃນການເກັບຄ່າທຳນຽມ ແມ່ນໃຫ້ກຳນົດເອົາລາຄາປິດຂອງມື້ທີ່ຕະຫຼາດຫຼັກຊັບ ຕົກລົງເຫັນດີຕໍ່ການສະເໜີຂໍໂອນຮຸ້ນ.

### ມາດຕາ 26 ຂໍ້ຫ້າມກ່ຽວກັບການໂອນຮຸ້ນ

ຫ້າມ ຜູ້ໂອນ, ຜູ້ຮັບໂອນ, ທະນາຄານດູແລຊັບສິນ, ບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີພຶດຕິກຳໃດໜຶ່ງ ບໍ່ວ່າທາງກົງ ຫຼື ທາງອ້ອມ ດັ່ງນີ້:

1. ສະໜອງຂໍ້ມູນ ຫຼື ເອກະສານປະກອບ ຫຼື ເອກະສານຢັ້ງຢືນ ກ່ຽວຂ້ອງກັບການໂອນຮຸ້ນ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;
2. ໂອນຮຸ້ນ ທີ່ມີຄຳສັ່ງ ໂຈະການເຄື່ອນໄຫວ ຫຼື ອາຍັດ ຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ;
3. ໂອນຮຸ້ນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຜູ້ຖືຄອງຮຸ້ນ;
4. ສວຍໃຊ້ຊ່ອງຫວ່າງທາງດ້ານນິຕິກຳໃນການໂອນຮຸ້ນ ເພື່ອຫຼີກລ້ຽງການສົ່ງຄຳສັ່ງຊື້-ຂາຍຮຸ້ນ ໃນຕະຫຼາດຫຼັກຊັບ;
5. ໂອນຮຸ້ນໃຫ້ແກ່ ຜູ້ຮັບໂອນ ເພື່ອເຮັດໃຫ້ ຜູ້ຮັບໂອນ ກາຍເປັນຜູ້ມີອຳນາດຄວບຄຸມ;
6. ຕົວະຍົວະຫຼອກລວງ, ນຳໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່ ຜູ້ໂອນ ຫຼື ຜູ້ຮັບໂອນ ໃນການໂອນຮຸ້ນ;
7. ໂອນຮຸ້ນໂດຍບໍ່ສອດຄ່ອງ ຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
8. ແກ່ຍາວເວລາໃນການພິຈາລະນາ ກ່ຽວກັບການໂອນຮຸ້ນ ໂດຍບໍ່ມີເຫດຜົນພຽງພໍ;
9. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 27 ນະໂຍບາຍຕໍ່ຜູ້ມີຜົນງານ

ຜູ້ໂອນ, ຜູ້ຮັບໂອນ, ທະນາຄານດູແລຊັບສິນ, ບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບການໂອນຮຸ້ນ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການສະເພາະ.

### ມາດຕາ 28 ມາດຕະການຕໍ່ຜູ້ລະເມີດ

ຜູ້ໂອນ, ຜູ້ຮັບໂອນ, ທະນາຄານດູແລຊັບສິນ, ບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບການໂອນຮຸ້ນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ລັດ, ສັງຄົມ, ບຸກຄົນ ຫຼື ນິຕິບຸກຄົນ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຮັບຜິດຊອບທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 166, ມາດຕາ 167, ມາດຕາ 168, ມາດຕາ 169 ແລະ ມາດຕາ 170 ຂອງກົດໝາຍວ່າດ້ວຍຫຼັກຊັບ. ນອກຈາກນີ້ ຍັງຈະຖືກປະຕິບັດມາດຕະການ ດັ່ງນີ້:

ທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ ຫຼື ຕະຫຼາດຫຼັກຊັບ ທີ່ລະເມີດຂໍ້ຫ້າມໃດໜຶ່ງໃນ ມາດຕາ 26 ແລະ ຂໍ້ກຳນົດອື່ນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝໃນອັດຕາສ່ວນສາມສິບ ສ່ວນຮ້ອຍ ຂອງມູນຄ່າການໂອນຕົວຈິງ ພ້ອມທັງ ທວງເອົາຮຸ້ນທີ່ໄດ້ໂອນໃຫ້ແກ່ ຜູ້ຮັບໂອນ ຄືນຄືນໃຫ້ແກ່ ຜູ້ໂອນ ທັງໝົດ. ກໍລະນີ ບໍ່ສາມາດທວງເອົາຮຸ້ນທີ່ໂອນມາໄດ້ ຫຼື ໄດ້ແຕ່ບໍ່ຄົບຖ້ວນ ທະນາຄານດູ

ແລຊັບສິນ ຫຼື ບໍລິສັດຫຼັກຊັບ ຫຼື ຕະຫຼາດຫຼັກຊັບ ຕ້ອງທົດແທນຄ່າເສຍຫາຍຕາມມູນຄ່າການໂອນຕົວຈິງ ໃຫ້ແກ່ ຜູ້ໂອນ ຢ່າງຄົບຖ້ວນ.

ຜູ້ໂອນ, ຜູ້ຮັບໂອນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ລະເມີດຂໍ້ຫ້າມໃດໜຶ່ງໃນ ມາດຕາ 26 ແລະ ຂໍ້ກຳນົດອື່ນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝໃນອັດຕາສ່ວນ ສິບສ່ວນຮ້ອຍ ຂອງ ມູນຄ່າການໂອນຕົວຈິງ. ພ້ອມນີ້ ຜູ້ຮັບໂອນຕ້ອງສົ່ງຮຸ້ນທີ່ຕົນໄດ້ຮັບໂອນທັງໝົດຈາກ ຜູ້ໂອນ ຄືນໃຫ້ແກ່ ບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ ກໍລະນີ ຜູ້ຮັບໂອນ ເປັນລູກຄ້າຂອງ ທະນາຄານດູແລຊັບສິນ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 29 ການຈັດຕັ້ງປະຕິບັດ**

ຜູ້ໂອນ, ຜູ້ຮັບໂອນ, ທະນາຄານດູແລຊັບສິນ, ບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ, ສຳນັກງານຄະນະ ກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບການໂອນຮຸ້ນ ຈົ່ງຮັບຮູ້ ແລະ ຈັດຕັ້ງ ປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 30 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນ ລະບຽບວ່າດ້ວຍ ການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ສະບັບເລກທີ 006/ຄຄຊ, ລົງວັນທີ 20 ກັນຍາ 2013.

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນ ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງ ລັດຖະການ ສິບຫາວັນ.

ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ

ສົມດີ ດວງດີ